ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

PCD

ເລກທີ 701 /PCD

ນະຄອນຫລວງວຽງຈັນ, ວັນທີ 07 SEP 2020

ໜັງສືແຈ້ງ

ຮຽນ: ທ່ານ ຫົວໜ້າສຳນັກງານ ສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ
ແລະ ຕະຫລາດຫລັກຊັບ.
ບ້ານ ໂພນສະອາດ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ, ຕູ້ ປນ 19

ເລື່ອງ: ຂໍອະນຸຍາດຊີ້ແຈງລາຍລະອຽດກ່ຽວກັບການລາຍງານ ແລະ ເປີດເຜີຍຂໍ້ມູນ ເອກະສານລາຍງານການເງິນ ປະຈຳໄຕມາດ 1 ຂອງປີ 2020.

- ອີງຕາມໜັງສືແຈ້ງການຂອງ ສຄຄຊ ການລາຍງານ ແລະ ເປີດເຜີຍຂໍ້ມູນເອກະສານລາຍງານການເງິນປະຈຳປີ ໄຕມາດ 1 ຂອງປີ 2020 ຂອງບໍລິສັດ ພກພ ສະບັບເລກທີ 0065/ສຄຄຊ ລົງວັນທີ 27 ສງຫາ 2020.

- ອີງຕາມຂໍ້ຕົກລົງ ວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ (ສະບັບປັບປຸງ), ລົງວັນທີ 04/ສຄຄຊ ລົງວັນທີ 28 ມັງກອນ 2019.

ຂ້າພະເຈົ້າໃນນາມ ຜູ້ອຳນວຍການໃຫຍ່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຂໍອະນຸຍາດ ຊີ້ ແຈງ ລາຍລະອຽດກ່ຽວກັບການລາຍງານ ແລະ ເປີດເຜີຍຂໍ້ມູນ ເອກະສານລາຍງານການເງິນປະຈຳໄຕມາດ 1 ຂອງປີ 2020. ລາຍລະອຽດດັ່ງຕໍ່ລົງໄປນີ້:

ເນື່ອງຈາກບົດລາຍງານການເງິນປະຈຳໄຕມາດ 1 ຂອງປີ 2020 ຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ທີ່ໄດ້ເປີດເຜີຍເຂົ້າໃນລະບົບເປີດເຜີຍຂໍ້ມູນຂອງ ຕລຊລ ໃນວັນທີ 03/06/2020. ໃບລາຍງານຜົນໄດ້ຮັບ ແລະ ໃບລາຍງານກະແສເງິນສົດລວມ ແມ່ນໄດ້ເອົາຕົວເລກ ໄຕມາດ 1 ຂອງປີ 2020 ປຽບທຽບກັບ ຕົວເລກໃນທ້າຍ ປີ 2019 ນັ້ນສາເຫດເກີດມາຈາກຄວາມເຂົ້າໃຈຜິດຂອງໜ່ວຍງານບັນຊີ ທີ່ສຶກສາລະບຽບການເປີດເຜີຍຂໍ້ມູນທີ່ກຳນົດໃຊ້ຂອງ ສຄຄຊ ບໍ່ລະອຽດທີ່ຖ້ວນ, ຈຶ່ງເປັນເຫດໃຫ້ເກີດຄວາມຜິດພາດ.

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 6, ໂຮງແຮມວຽງຈັນ ພລາຊາ, ບ້ານຫັດສະດີ, ເມືອງຈັນທະບູລີ, ນະຄອນຫລວຈັນ.
Tel/Fax: (856-21)265394; E-mail: info@pcdlao.com ; website: www.pcdlao.com

ດັ່ງນັ້ນ, ບໍລິສັດ ພູສີກໍ່ສ້າງແລະ ພັດທະນາ ມະຫາຊົນ ຈຶ່ງຂໍອະນຸຍາດ ຍົກເລີກບົດລາຍງານ ຜົນປະກອບການ ແລະ ບົດລາຍງານການເງິນໄຕມາດ 1 ຂອງປີ 2020 ທີ່ເປີດເຜີຍໄປແລ້ວໃນວັນທີ 03/06/2020. ຂໍອະນຸຍາດ ເປີດເຜີຍ ບົດລາຍງານ ຜົນປະກອບການແລະ ບົດລາຍງານການເງິນໄຕມາດ 1 ຂອງປີ 2020 ສະບັບປັບປຸງໃໝ່ເຂົ້າ ລະບົບເປີດເຜີຍຂໍ້ມູນຂອງ ຕລຊລ ແລະ ສຄຄຊ ໃນມື້ນີ້ ວັນທີ 07/09/2020.

ດັ່ງນັ້ນ, ຈຶ່ງໄດ້ເຮັດໜັງສືຊີ້ແຈງມາຍັງທ່ານເພື່ອຮັບຊາບ ແລະ ເຊື່ອໝັ້ນໃນການນຳພວກ ເຮົາດ້ວຍ.

ຜູ້ອຳນວຍການໃຫຍ່
ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ສົມທາ ພົມມະຈິດ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 6, ໂຮງແຮມວຽງຈັນ ພລາຊາ, ບ້ານຫັດສະດີ, ເມືອງຈັນທະບູລີ, ນະຄອນຫລວງຈັນ.
Tel/Fax: (856-21)265394; E-mail: info@pcdlao.com ; website: www.pcdlao.com